## ຕອນທີ໑: ເຈົ້າມະຫາຊີວິດສີສວ່າງວົງ: ເພິ່ນຢືນຢູ່ຈຸດໃດແທ້?



ຈາກຮູບພາບ
ເຮົາຈະສັງເກດເຫັນວ່າເພິ່ນເປັນຄົນສູງໃຫຍ່ແລະ*ສໍ່ສະແດງເຖິງການມີອຳນາດໃນບຸກຄະລິກແລະຫນ້າຕາຂອງເພິ່ນ* ດັ່ງນັ້ນຈາກຈຸດເລີ້ມຕົ້ນນີ້
ປະກອບກັບທີ່ວ່າເພິ່ນເປັນພະເຈົ້າແຜ່ນດິນທີ່ສືບເຊື້ອສາຍແນວຫນໍ່ທີ່ອົງອາດແລະຍາວນານຂອງຊຸນບໍຣົມ
*ເຈົ້າສີສວ່າງວົງຈຶ່ງຢູ່ໃນທັງທ່າຈະບໍ່ຍອມໃຜງ່າຍໆແລະທັງທ່າທີ່ຮັກສາໄວ້ຊຶ່ງກຽດສັກສີຂອງວົງຕະກູນເພິ່ນ ດ້ວຍທຸກສະຕິປັນຍາທີ່ເພິ່ນມີ*
ອີກຢ່າງເພິ່ນເປັນຄົນລາວຄົນທຳອິດທີ່ໄດ້ຮັບການສຶກສາຊັ້ນສູງຈາກປະເທດຝຣັ່ງເສດ
*ດັ່ງນັ້ນຈຶ່ງບໍ່ເປັນການແປກທີ່ເພິ່ນຈະຕີຕຶງວ່າ*
*ເພິ່ນນັ້ນຢູ່ໃນຖານະທີ່ຈະນຳພາປະເທດຊາດບ້ານເມືອງໄປສູ່ຄວາມຢູ່ລອດຕລອດປອດໄພດ້ວຍກຳລັງປັນຍາຂອງເພິ່ນເອງ*

ນອກຈາກນີ້
ເຈົ້າສີສວ່າງວົງຍັງເປັນສາຍເລືອດໂດຍກົງຂອງເຊື້ອຫນໍ່ກະສັດລາວທີ່ເຝົ້າຮັກສາບັນລັງນີ້ໄວ້ດ້ວຍກ

ານຮູ້ຈັກເບິ່ງຫລູ່ທາງລົມເປັນຢ່າງດີ
ອີກຢ່າງມັນກໍເປັນການຍາກຢ່າງຍິ່ງທີ່ເຮົາຈະລົງເອີ່ຍຢ່າງງ່າຍດາຍວ່າ
ເພິ່ນນັ້ນຄິດສັ້ນເຫັນແຕ່ປາຍດັງຂອງຕົນເທົ່ານັ້ນເປັນສຳຄັນ
ເພາະພາລະທີ່ເພິ່ນແບກຫາບແລະວິທີທາງທີ່ບັນພະບຸຣຸດໄດ້ເຄີຍປະຕິບັດມາ
ລ້ວນແລ້ວແຕ່ບົ່ງຊີ້ວ່າ  ເພິ່ນນັ້ນເດີ່ນຕາມລູ່ຕາມແປວຢ່າງຂ່ອນຂ້າງເຂັ້ມງວດ
ຫາກມີສິ່ງນຶ່ງທີ່ບໍ່ຄັກກໍຄື
ເພິ່ນນັ້ນດຳເນີນຕາມແນວທາງທີ່ພໍປະທັງຕົວຊື່ໆແລະທີສຳຄັນກໍຄືວິທີທາງນັ້ນກຳລັງຢູ່ໃນທ່າທີ່ເສື່ອມໂຊມລົງໄປເລື້ອຍໆ  ເວົ້າອີກຢ່າງນຶ່ງກໍຄື  ໂລກເຂົາກ້າວໄປໄກແລ້ວ
ແຕ່ແນວທາງທີ່ເພິ່ນປະຕິບັດນັ້ນພັດກຳລັງຖອຍຫລັງເຂົ້າຄອງນັ້ນເອງ

ນອກນັ້ນຍັງເປັນທີ່ຮູ້ກັນດີວ່າ
ເຈົ້າສີສວ່າງວົງນັ້ນເຫົ່ເຫີມຝຣັ່ງເສດຈົນເຖິງຂັ້ນທີ່ບາງຄົນຄິດວ່າເພິ່ນບໍ່ມີແນວຄິດທີ່ຈະແຍກຕົວອອກຈາກຄວາມເປັນເມືອງຂຶ້ນຂອງຝຣັ່ງເລີຍ  ຢ່າງນຶ່ງອາດຈະເປັນຍ້ອນວ່າ
ເພິ່ນເຫັນຄວາມຈເຣີນແລະກຳລັງແຮງຂອງຝຣັ່ງເປັນຢ່າງດີ
ຢ່າງສອງຊຶ່ງເປັນທີ່ສຳຄັນຢ່າງຍິ່ງຍວດນັ້ນຄືເພິ່ນຕະຫນັກດີວ່າ
ຖ້າປາສຈາກອຳນາດຄຸ້ມຄອງຂອງຝຣັ່ງເສດເສັ່ງແລ້ວ
ສຍາມແລະວຽດນາມກໍຈະກືນກິນເອົາເມືອງລາວທີ່ອ່ອນເປັ້ຽໃນທຸກໆດ້ານໄດ້ງ່າຍໆ
ດັ່ງນັ້ນເພິ່ນຈຶ່ງຢາກຍືດເວລາຫລືຕໍ່ເວລາອອກໄປຫລາຍເທົ່າໃດແຮ່ງດີ
ເພື່ອເມືອງລາວເຮົາຈະໄດ້ຢູ່ໃນທ່າທີ່ພໍຕໍ່ກອນໄດ້ກັບປະເທດອ້ອມຂ້າງທີ່ເປັນປໍຣະປັກດັ່ງເດີມຂອງບ້ານເມືອງເຮົາໄດ້ໃນເວລາທີ່ເຫມາະສົມ  ຄວາມຄິດຝັນດັ່ງກ່າວເປັນສິ່ງທີ່ດີຍິ່ງ
ແຕ່ບັນຫາມັນມີຢູ່ວ່າ  *ເພິ່ນເກືອບວ່າຈະປະໃຫ້ແຕ່ເວລາເປັນເຈົ້າການເທົ່ານັ້ນ*
*ໂດຍບໍ່ໄດ້ເຮັດຫຍັງເລີຍພໍຈະຊີ້ສະແດງວ່າ*
*ເພິ່ນນັ້ນໄດ້ກະກຽມປະເທດຊາດເພື່ອຄວາມເປັນເອກລາດໃນວັນນຶ່ງ*
*ແລະເພື່ອຄວາມຢູ່ລອດຂອງບ້ານເມືອງໃນວັນຂ້າງຫນ້າ*

ຈະເວົ້າແລ້ວ
ຖ້າບໍ່ເກີດມີສົງຄາມໂລກຄັ້ງທີສອງເກີດຂຶ້ນໂດຍທີ່ຍີ່ປຸ່ນເຂົ້າມາມີອິດທິພົນແລະຍຶດເອົາເມືອງລາວໃນທີ່ສຸດນັ້ນ
ເຈົ້າສີສວ່າງວົງກໍຄົງຈະເປັນກະສັດທີ່ບໍ່ມີບັນຫາຫຍັງແລະຄົງຈະຖືກລືມໄປໃນປວັດສາດດັ່ງຫລາຍ

ໆກະສັດໃນປວັດສາດລາວອີກຜູ້ນຶ່ງ ດ້ວຍວ່າມີຍີ່ປຸ່ນເຂົ້າມາເປັນບັນຫາໃຫຍ່
ຢາກບໍ່ຢາກເພິ່ນກໍຕ້ອງມີສ່ວນທີ່ສຳຄັນໃນຊ່ວງນັ້ນຢ່າງຫລີກບໍ່ພົ້ນ

ເລີ້ມຕົ້ນແຕ່ປີ໑໙໔໑ເປັນຕົ້ນໄປ
ເພື່ອຕໍ່ຕ້ານກັບລັດທິໄທໃຫຍ່ຂອງສຍາມທີ່ຕ້ອງການຢາກຈະກືນກິນເອົາຄົນເຊື້ອສາຍໄຕໃນທົ່ວເອເ
ຊັຽອາຄະເນໄປຂື້ນກັບເຂົາ
ຊຶ່ງຈຸດສຳຄັນຂອງລັດທິໄທໃຫຍ່ກໍຄືດິນແດນລາວທາງຝັ່ງຊ້າຍຂອງແມ່ນ້ຳຂອງທີ່ສຍາມເຫມົາເອົາ
ວ່າ ຕົນເອງນັ້ນເສັຽໄປໃນສໄມລ່າຫົວເມືອງຂຶ້ນແກ່ຝຣັ່ງນັ້ນເອງ
ທາງຝຣັ່ງເສດຈຶ່ງມາໄມ້ໃຫມ່ໂດຍສນັບສນູນໃຫ້ມີການຕື່ນຕົວໃນຄວາມເປັນລາວ
ທີ່ແຕກຕ່າງຈາກຄວາມໄຕຫລືໄທຂອງສຍາມ

ຈະດ້ວຍການສນັບສນູນຂອງຝຣັ່ງເສດ
ຫລືຈະດ້ວຍຄວາມເປັນລາວທີ່ຖືກປົກງຳມາຫລາຍຮ້ອຍປີແລ້ວ
ຄວາມຕື່ນຕົວໃນເອກລາດໃນຄວາມເຜົ່າພັນທີ່ທະນົງອົງອາດຂອງລາວເຮົາ
ກໍທະວີແຮງຂຶ້ນໂດຍສະເພາະກໍແມ່ນໃນຫມູ່ປັນຍາຊົນ ໃນຖັນແຖວຂ້າຣາຊການ
ແລະຫົວເມືອງທີ່ໃຫຍ່ໆຂອງລາວເຮົາທັງຫລາຍ ເຊັ່ນຫລວງພະບາງ ວຽງຈັນ ທ່າແຂກ
ສວັນນະເຂດ ແລະປາກເຊເປັນຕົ້ນ

ເຈົ້າມະຫາຊີວິດສີສວ່າງວົງ ບາງທີອາດຈະຕີລາຄາຕ່ຳເຖິງການຕື່ນຕົວນັ້ນ
ຫລືອາດຈະເຊື່ອຖ້ອຍຄຳຂອງຝຣັ່ງເສດຫລາຍເກີນໄປ ເພາະຝຣັ່ງໄດ້ໃຫ້ສັນຍາໃນປີ໑໙໔໑ວ່າ
ມື້ໃດມື້ນຶ່ງ ກະສັດຂອງຫລວງພະບາງຈະເປັນກະສັດຂອງແຜ່ນດິນລາວທົ່ວປະເທດ
ບໍ່ແມ່ນແຕ່ນະຄອນຫລວງພະບາງດັ່ງທີ່ເຄີຍເປັນມາ
ອີກຢ່າງເມື່ອສຍາມຍຶດເອົາແຂວງໄຊຍະບຸຣີແລະຈຳປາສັກໄປ
ດ້ວຍການເຂົ້າແຊກແຊງຊ່ອຍເຫລືອຂອງຍີ່ປຸ່ນໃນປີນັ້ນເອງ
ຝຣັ່ງກໍໃຫ້ອຳນາດຂອງຫລວງພະບາງກວມລົງມາຮອດວຽງຈັນເປັນຄັ້ງທຳອິດ ຫລືບາງທີ
ເຈົ້າມະຫາຊີວິດສີສວ່າງວົງອາດຈະຄິດການໄກແທ້ໆ
ເພາະເຮັດແນວໃດເມືອງລາວກໍຍັງບໍ່ແຂງແຮງພໍທີ່ຈະປົກຄອງຕົນເອງໄດ້ເທື່ອ
ດັ່ງນັ້ນເພິ່ນຈຶ່ງເຂົ້າຂ້າງຝຣັ່ງ ທັນທີທີ່ຝຣັ່ງກັບຄືນເຂົ້າມາອີກຫລັງຈາກທີ່ຍີ່ປຸ່ນເສັຽໄຊຫນີອອກໄປ
ທັງທີ່ວ່າເພິ່ນໄດ້ປະກາດຄວາມເປັນເອກລາດຂອງປະເທດຈາກຝຣັ່ງມາກ່ອນແລ້ວ ຈະເວົ້າແລ້ວ

ເພິ່ນກໍບໍ່ຕ້ອງການຢາກປະກາດເອກລາດເລີຍ ແຕ່ຍ້ອນຍີ່ປຸ່ນຢືນຢັນໃຫ້ເຮັດ
ດັ່ງທີ່ເຂົາທຳກັນໃນວຽດນາມ ພະມ້າ ແລະອິນໂດເນເຊັຽເປັນຕົ້ນ ເພິ່ນຈຶ່ງຫລີກລ້ຽງບໍ່ໄດ້

ທີ່ເປັນເລື້ອງຈົດຂານກັນທີ່ສະແດງເຖີງຄວາມຂັດແຍ້ງລະຫວ່າງວັງຫນ້າກັບວັງຫລັງນັ້ນ
ກໍເພາະເຈົ້າສີສວ່າງວົງປົດເຈົ້າເພັຊຣາດອອກຈາກຕຳແຫນ່ງມະຫາອຸປຣາດ
ຫລັງຈາກທີ່ເພິ່ນໄດ້ເອົາພາກໄຕ້ຂອງລາວມາເຂົ້າຮ່ວມກັບລັຖບານຂອງຣາຊອານາຈັກ
ຊຶ່ງການກະທຳຂອງເຈົ້າເພັຊຣາດດັ່ງກ່າວ
ເປັນການຂັດກັບນະໂຍບາຍຂອງເຈົ້າສີສວ່າງວົງທີ່ຢາກຄືນເມືອງລາວໄປສູ່ການຄຸ້ມຄອງຂອງຝຣັ່ງເ
ສດດັ່ງເດີມ

ຝຣັ່ງເສດເຂົ້າປົກຄອງລາວອີກໃນເດືອນ໕ປີ໑໙໔໖
ຫລັງຈາກທີ່ລັຖບານລາວອິສຣະຊຶ່ງນຳໂດຍເຈົ້າເພັຊຣາດໄດ້ພາກັນຫລົບຫນີໄພການເມືອງໄປສູ່ປະ
ເທດໄທ ແລະໃນວັນທີ໔໗ເດືອນສິງຫາປີ໑໙໔໖
ຝຣັ່ງກໍໄດ້ເຊັນສັນຍາໃຫ້ເມືອງລາວແຕ່ເຫນືອຕລອດໄຕ້ເປັນອັນນຶ່ງອັນດຽວກັນໂດຍມີກະສັດອີງຕາ
ມລັຖທັມມະນູນເປັນຜູ້ປົກຄອງພາຍໄຕ້ສະຫະພັນຝຣັ່ງເສດ (French Union)
ຕໍ່ມາໃນເດືອນກໍຣະກະດາປີ໑໙໔໙ ຝຣັ່ງເສດກໍດຳເນີນການໃຫ້ເອກລາດແກ່ລາວ
ໂດຍຍັງຄົງຄຸ້ມແຕ່ທາງດ້ານການທະຫານແລະການຕ່າງປະເທດຢູ່ເທົ່ານັ້ນ

ດ້ວຍການປ່ຽນແປງທາງການເມືອງດັ່ງກ່າວ ຜູ້ນຳລາວອິສຣະຫລາຍທ່ານອັນມີເຈົ້າສຸວັນນະພູມມາ
ພະຍາຄຳມ້າວ ແລະທ່ານກະຕ່າຍ ໂດນສະໂສຣິດ ກໍພາກັນກັບຄືນປະເທດ
ມາຮອດເດືອນຕຸລາປີ໑໙໕໓ ເມືອງລາວກໍໄດ້ຮັບເອກລາດຢ່າງສົມບູນ
ເຈົ້າຊີວິດສີສວ່າງວົງໄດ້ເສັຽຊີວິດລົງໃນປີ໑໙໕໙
ສອງທິດຫລັງຈາກທີ່ເຈົ້າເພັຊຣາດໄດ້ລາໂລກນີ້ໄປກ່ອນ
ແລະກໍພໍດີສອງປີເຕັມຫລັງຈາກທີ່ເຈົ້າເພັຊຣາດໄດ້ຖືກເຊີນໃຫ້ກັບຄືນມາຢູ່ເມືອງລາວຢ່າງມີມະຕິເປັ
ນເອກສັນຈາກສະພາຜູ້ແທນຣາຊດອນ ຈະເວົ້າແລ້ວ
ນັບວ່າຣາຊການຂອງເຈົ້າສີສວ່າງວົງນັ້ນຍາວນານເປັນທີ່ສຸດໃນປວັດສາດລາວ
ຮອງກໍແຕ່ຣາຊການຂອງເຈົ້າສຸຣິຍະວົງສາ
ຊຶ່ງເປັນສໄມທີ່ເມືອງລາວຮຸ່ງເຮືອງເຫລືອງເຫລື້ອມທີ່ສຸດ

ຫາກຈະສລຸບກ່ຽວກັບເຈົ້າສີສວ່າງວົງ ຂ້າພະເຈົ້າກໍຈະກ່າວໃນທຳນອງດັ່ງຕໍ່ໄປນີ້:

ໃນແງ່ສະພາບການລະຍະສັ້ນ: ເພິ່ນເຖິງກັບບໍ່ໄດ້ເລື້ອງເອົາເລີຍ ເພາະບໍ່ເປັນໄປຕາມຄວາມຮຽກຮ້ອງຕ້ອງການຂອງສະພາບການ ບໍ່ພໍຍັງຂືນກະແສອີກດ້ວຍ ແຕ່ເຖິງຢ່າງໃດກໍດີ ເພິ່ນກໍມີສ່ວນເຮັດໃຫ້ການນອງເລືອດທີ່ບໍ່ຈຳເປັນແລະເປັນປໂຍດປານໃດໜ້ອຍລົງ ເມື່ອເພິ່ນບໍ່ນຳພາປະຊາຊົນລຸກຮື້ຂຶ້ນສູ້ກັບກຳລັງແຮງຂອງຝຣັ່ງເສດຫລັງຈາກທີ່ຍີ່ປຸ່ນຖອນຕົວອອກໄປ

ໃນແງ່ສະພາບການລະຍະຍາວ: ບັນຫານີ້ເວົ້າຍາກ ເບິ່ງຢ່າງນຶ່ງ ທາງເດີນຂອງເຈົ້າສີສວ່າງວົງນັ້ນຜິດຢ່າງມະຫັນ ເພາະບໍ່ໄປຕາມຄວາມຮຽກຮ້ອງຕ້ອງການຂອງຄົນຮຸ່ນໃຫມ່ທີ່ຕ້ອງການເອກລາດໃນທັນໃດ ແຕ່ຖ້າຈະເບິ່ງອີກຢ່າງນຶ່ງ ການປ່ອຍປະໃຫ້ສະຖານນະການເຊັ່ງຄາຍໄປໃນຕົວຂອງມັນເອງນັ້ນ ນຳຜົນດີເກີນກ່ວາທີ່ເຮົາຈະຄາດຄຶດໄດ້ ລອງຄຶດໃຫ້ໄປໄກກ່ວານັ້ນວ່າ ຖ້າທັງເຈົ້າສີສວ່າງວົງແລະເຈົ້າເພັຊຣາດເຫັນຖືກຕ້ອງຄ່ອງກັນໂດຍບໍ່ມີຄວາມອາຄາດບາດຫມາງກິດຂວາງເປັນເຄົ້າ ເມືອງລາວເຮົາກໍຄົງຈະບໍ່ເສັຽຄວາມເປັນຣັຖບຸຣຸດຂອງຊາດໃນຕົວເຈົ້າເພັຊຣາດໄປຢ່າງຫນ້າເສັຽດາຍທີ່ສຸດ ໃນຂະນະທີ່ບ້ານເມືອງໃນລະຍະກໍ່ຕັ້ງປະເທດຕ້ອງການຄົນຢ່າງເພິ່ນເປັນທີ່ສຸດ ແລະໃຜຈະບອກໄດ້ວ່າ ລະບອບກະສັດຂອງລາວຈະບໍ່ແຂງແກ່ນກ່ວາດັ່ງທີ່ເປັນຢູ່ ດີບໍ່ດີbureaucracyຂອງລາວເຮົາກໍ່ະແຂງແກ່ນຂຶ້ນ ຍ້ອນມີເຈົ້າເພັຊຣາດຜູ້ຊຶ່ງປະຊາຊົນເຄົາລົບຮັກແລະປີຊາສາມາດເປັນກຳລັງແຮງຢູ່ເບື້ອງຫລັງກໍເປັນໄດ້ ແລະນັ້ນກໍຫມາຍຄວາມວ່າລະບອບການເມືອງທີ່ຜິດແປກດັ່ງທີ່ເປັນຢູ່ໃນຂະນະນີ້ ຄົງຈະຍາກທີ່ຈະຝັງຮາກລົງເລິກໃນຜືນແຜ່ນດິນລາວ ເປັນແນ່ແທ້

